**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 1 ມິຖຸນາ 2008 ( 06-01-2008 )**

---

## ປີ້ທີ່ນໍາໄປສູ່ຄວາມສໍາເຣັດອັນແທ້ຈິງ:

**ຂໍ້ພຣະຄັມພີໃນບົດຮຽນ:** (ສຸພາສິດ 1:1-7; 2:4-8; 3:5-6, 11-12)

**ຄໍາຖາມແຫ່ງຊີວິດ:** ຂ້າພະເຈົ້າຈະປະສົບຄວາມສໍາເຣັດຢ່າງແທ້ຈິງໃນຊີວິດໄດ້ຢ່າງໃດ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະຜູ້ເປັນເຈົ້າຢາກໃຫ້ຄົນທັງຫລາຍມີຄວາມສໍາເຣັດໃນການດໍາເນີນຊີວິດອັນຖືກຕ້ອງ ແລະພຣະອົງຊົງບອກສອນຄົນທີ່ຮູ້ຈັກແລະວາງໃຈເຊື່ອໃນພຣະອົງໃນທາງທີ່ເຂົາເຈົ້າສາມາດເຮັດໄດ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ສະແດງອອກເຖິງສະຕິປັນຍາທີ່ມາຈາພຣະເຈົ້າໃນການດໍາຣົງຊີວິດທີ່ປະສົບຄວາມສໍາເຣັດໂດຍ:

- ການເຫັນດີວ່າພຣະເຈົ້າຕ້ອງການໃຫ້ທ່ານມີຄວາມສໍາເຣັດໃນການດໍາຣົງຊີວິດອັນຖືກຕ້ອງແລະ...
- ຮັບເອົາການນໍາພາອັນສລາດຈາກຂໍ້ພຣະຄັມພີໃນການດໍາຣົງຊີວິດທີ່ປະສົບຄວາມສໍາເຣັດ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນໍາ:**

- ແນະນໍາໃຫ້ນັກຮຽນເວົ້າເຣື່ອງຜູ້ໃຫ້ຄໍາປຶກສາທີ່ດີທີ່ສຸດທີ່ເຂົາເຈົ້າໄດ້ພົບມາ.
- ຄົນສ່ວນຫລາຍເມື່ອເປັນຜູ້ໃຫຍ່ແລ້ວມັກຈະຊອກຫາຜູ້ປຶກສາເຣື່ອງການດໍາເນີນຊີວິດ. ປື້ມແນະນໍາ, ໃຫ້ການຄໍາປຶກສາຂ້ອນຂ້າງໄດ້ຂາຍດີທີ່ສຸດ, ແລະຢູ່ໃນໜັງສືພິມໃນຄໍລັມກ່ຽວກັບການໃຫ້ຄໍາປຶກສານັ້ນເປັນສາຣະພິເສດທີ່ນິຍົມອ່ານກັນ. ໃນປື້ມສຸພາສິດບໍ່ໄດ້ຂຽນເຣື່ອງການໃຫ້ຄໍາປຶກສາຫລາຍແຕ່ເປັນປື້ມທີ່ໃຫ້ສະຕິປັນຍາ

ເປັນພຣະຄຳອັນເກົ່າແກ່ແຕ່ດັ້ງເດີມທີ່ສາມາດຊ່ອຍພວກເຮົາໄດ້ຈົນມາຮອດປະຈຸບັນນີ້ໄດ້.

## 1. ຮຽນຈາກຂໍ້ພຣະຄັມພີ: (ສຸພາສິດ 1:1-6)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 1:1-6
- ໃນ 6 ຂໍ້ນີ້ເໝືອນກັບວ່າເປັນຄຳນຳຂອງປຶ້ມເຫລັ້ມນີ້ຊຶ່ງຂຽນໄວ້ທາງໜ້າ ແລະທາງຫລັງປົກຂອງປຶ້ມ,
- ກະສັດຊາໂລໂມນໄດ້ຂຽນປຶ້ມພຣະທັມນີ້ຂຶ້ນມາເພື່ອທຸກຄົນຈະໄດ້ຄຳແນະນຳ ແລະມີຄວາມເຂົ້າໃຈ
- ຄຳຖາມ: ທຸກມື້ນີ້ຄົນທັງຫລາຍຊອກຫາຄຳແນະນຳ ແລະການເຂົ້າໃຈເພາະດ້ວຍເຫດໃດ?
- ທ່ານສາມາດຊ່ອຍໃຫ້ເຂົາເຈົ້າເບິ່ງໃນພຣະຄັມພີໄດ້ດ້ວຍວິທີໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ສຸພາສິດ 1:1-6)
1. ແມ່ນໃຜເປັນຜູ້ຂຽນປຶ້ມພຣະທັມສຸພາສິດ ແລະທ່ານຮູ້ຈັກເຣື່ອງຂອງລາວຫຍັງແດ່?
2. ຈຸດປະສົງຕ່າງ ໆ ຂອງພຣະທັມສຸພາສິດນີ້ໄດ້ຊີ້ແຈງຫຍັງແດ່?
3. ທ່ານຈະຊີ້ແຈງຈຸດປະສົງເຫລົ່ານີ້ດ້ວຍຄຳເວົ້າຂອງທ່ານຢ່າງໃດ?
4. ແມ່ນຫຍັງທີ່ທ່ານຈະຮຽນຈາກບົດຮຽນຂອງທ່ານໃນພຣະທັມສຸພາສິເຫລັ້ມນີ້?

## 2. ໂຄຣົບພຣະຜູ້ເປັນເຈົ້າ: (ສຸພາສິດ 1:7; 2:4-8)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ສຸພາສິດ 1:7; 2:4-8
- ໃຫ້ຊີ້ແຈງດັ່ງນີ້: ການເລີ້ມຕົ້ນຂອງພຣະທັມອັນບໍຣິສຸດ, ການມີຄວາມສງົບສຸກ ຂອງສອງຢ່າງທີ່ແຕກຕ່າງກັນຄື: ພາກສ່ວນຂອງພຣະເຈົ້າ ແລະພາກສ່ວນຂອງພວກເຮົາ.
- ທ້າທາຍນັກຮຽນໃຫ້ສະແດງໃຫ້ເຫັນວ່າ ແມ່ນຫຍັງທີ່ພຣະເຈົ້າຊົງຮຽກເອີ້ນໃຫ້ໄພ່ພົນຂອງພຣະອົງທຳໃນພຣະທັມສຸພາສິດ 1:7 (ຢຳເກງອົງພຣະຜູ້ເປັນເຈົ້າ).
- ໃນພຣະທັມສຸພາສິດ 2:4-5 ພຣະເຈົ້າສັນຍາວ່າຜູ້ໃດທີ່ກັບມາຫາພຣະອົງ ແລະສແວງຫາສະຕິປັນຍາຈາກພຣະອົງ ພຣະອົງຈະຊົງປະທານໃຫ້ ແລະສະຕິປັນຍານັ້ນຈະປົກປ້ອງຄຸ້ມຄອງທ່ານ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ສຸພາສິດ 1:7; 2:4-8)
1. ຕາມທີ່ກະສັດຊາໂລໂມນໄດ້ກ່າວມານັ້ນ: ແມ່ນຫຍັງເປັນສິ່ງແຮກ ແລະສິ່ງຈຳເປັນໃນການເລີ້ມຕົ້ນໃນສະຕິປັນຍາ?
2. ກະສັດຊາໂລໂມນພັລນາເຖິງຄົນທີ່ຊອກສແວງຫາສະຕິປັນຍານັ້ນເປັນແນວໃດ?
3. ພຣະເຈົ້າໄດ້ຊົງກະທຳແນວໃດໃຫ້ແກ່ຜູ້ທີ່ຊອກສແວງຫາສະຕິປັນຍາຂອງພຣະອົງຢ່າງຂຍັນໝັ່ນພຽນ?
4. ທ່ານໄດ້ສະແດງຄວາມໂຄຣົບພຣະຜູ້ເປັນເຈົ້າໃນຊີວິດຂອງທ່ານຢ່າງໃດ?

## 3. ດຳຣົງຊີວິດດ້ວຍຄວາມເຊື່ອ: (ສຸພາສິດ 3:5-6)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 3:5-6
- ສືບຕໍ່ **ພາກສ່ວນຂອງພວກເຮົາ/ພາກສ່ວນຂອງພຣະເຈົ້າ** ດ້ວຍການທ້າທາຍນັກຮຽນໃຫ້ຄົ້ນພົບ ແລະຊອກຫາການກະທຳທັງ 3 ຢ່າງທີ່ຜູ້ທີ່ເຊື່ອທັງຫລາຍໃນເວລາທີ່ຖືກເອີ້ນໃຫ້ຮັບເອົາ (ສຸພາສິດ 3:5-6; ຢ່າເຊື່ອໝັ້ນໃນຄວາມຮູ້ ແລະສະຕິປັນຍາຂອງຕົນເອງ)

- ຖ້າເຂົາເຈົ້າຈະເດີນທາງໄປບ່ອນໃດບ່ອນນຶ່ງເຂົາເຈົ້າໄດ້ການແນະນຳ ຫລືແຜນການເດີນທາງເພື່ອໃຫ້ໄປເຖີງຈຸດໝາຍປາຍທາງໄດ້ຢ່າງໃດ?
- ອະທິບາຍ: ຄົນສ່ວນຫລາຍມັກຈະດຳເນີນຊີວິດໄປຕາມແນວທາງນຶກຄິດຂອງຕົນເອງ ໂດຍທີ່ບໍ່ອາສັຍການນຳພາຂອງພຣະເຈົ້າ

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 3:5-6)

1. ການປະຕິບັດ 3 ຢ່າງທີ່ພຣະທັມຕອນນີ້ໄດ້ເຕືອນໃຫ້ຜູ້ທີ່ເຊື່ອທັງຫລາຍບໍ່ໃຫ້ທຳ ແລະໃຫ້ຮັບເອົາການຊອກສແວງຫາສະຕິປັນຍາຈາກພຣະເຈົ້ານັ້ນແມ່ນອັນໃດແດ່?
2. ພຣະເຈົ້າຊົງຕອບສນອງຜູ້ທີ່ຮັບເອົາທັງ 3 ຢ່າງນີ້ຢ່າງໃດ?
3. ຂໍ້ພຣະຄຳເຫລົ່ານີ້ໄດ້ພິສູດໃຫ້ເຫັນຄວາມຈິງໃນຊີວິດຂອງທ່ານຢ່າງໃດ?
4. ຈາກປະສົບການທີ່ຜ່ານມາໄດ້ສອນທ່ານເຣື່ອງອະນາຄົດຂ້າງໜ້າຢ່າງໃດ?

4. <u>ຍ້ອງຍໍການບອກສອນຂອງພຣະເຈົ້າ:</u> (ສຸພາສິດ 3:11-12)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 3:11-12
- ສົນທະນາ ເຣື່ອງລັກສະນະທ່າທີຂອງເດັກນ້ອຍ 2 ຫລື 3 ຄົນຊຶ່ງຖືກລົງໂທດ ແລະເຮັດແນວໃດຈຶ່ງຈະເຮັດໃຫ້ເຂົາຢູ່ໃນຣະບຽບວິນັຍໄດ້? ແລະຜູ້ໃຫຍ່ເດຈະມີເງື່ອນໄຂແນວໃດ?
- ໃຫ້ນັກຮຽນອະທິບາຍສິ່ງທີ່ເຂົາເຈົ້າເຫັນພ້ອມ ຫລືບໍ່ເຫັນພ້ອມດ້ວຍການເວົ້າອອກມາ: "ຣະບຽບວິນັຍ,
- ການເຂົ້າໃຈພຣະຄັມພີ, ຕອບສນອງຕໍ່ການອວຍພຣະພອນ".

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 3:11-12)

1. ເປັນຫຍັງ ແລະດ້ວຍເຫດໃດພຣະເຈົ້າຈຶ່ງບອກສອນຜູ້ທີ່ຮັກພຣະອົງ?
2. ຄຣິສຕຽນສາມາດຮຽນຣະບຽບວິນັຍຈາກອົງພຣະຜູ້ເປັນເຈົ້ານັ້ນມີຫຍັງແດ່?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະຄັມພີປຽບເໝືອນແຜນບອກໃຫ້ຄຣິສຕຽນເດີນກ້າວໄປຢ່າງຖືກຕ້ອງ.
- ຫົນທາງແຫ່ງຄວາມສຳເຣັດໃນຊີວິດນັ້ນຄື ໂຄຣົບອົງພຣະຜູ້ເປັນເຈົ້າ ແລະຊອກສແວງຫາສະຕິປັນຍາຈາກພຣະອົງ.
- ພຣະເຈົ້າຈະຊົງນຳພາຜູ້ທີ່ເຊື່ອໄວ້ວາງໃນໃນພຣະອົງໄປສູ່ຄວາມສຳເຣັດອັນແທ້ຈິງ.
- ພຣະເຈົ້າເປັນຜູ້ທີ່ຄົນທັງຫລາຍສົມຄວນຍ້ອງຍໍ, ຢ່າໄດ້ດູໝິ່ນປະໝາດການບອກສອນ ແລະຣະບຽບວິນັຍຂອງພຣະເຈົ້າຈັກເທື່ອ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH